# 06 ໝວກກັນກະທົບ






ມີສະຕິ ເຄົາລົບກົດ ຍາມຂັບລົດ ຈະປອດໄພ

ຍທຂ PWT

THE WORLD BANK
IBRD • IDA | WORLD BANK GROUP

# ອົງປະກອບຂອງໝວກກັນກະທົບ



## ປະເພດຂອງໝວກກັນກະທົບ








## ເລື່ອງຄວນຮູ້ຂອງໝວກກັນກະທົບ

- ປ່ຽນໝວກກັນກະທົບທັນທີ ຫຼັງຈາກເກີດອຸບປະຕິເຫດ ແລະ ໝວກໄດ້ຮັບແຮງກະທົບ ແລ້ວ, ບໍ່ຄວນເອົາໝວກກັບມາໃຊ້ອີກ.
- ຫຼີກລ້ຽງການແຂວນໝວກກັນກະທົບໃກ້ຖັງນ້ຳມັນລົດ ເພາະວ່າ ອາຍລະເຫີຍຂອງ ນ້ຳມັນລົດ ຈະເຮັດໃຫ້ໂຟມເສື່ອມສະພາບ ໄວຂຶ້ນ.
- ໃສ່ໝວກກັນກະທົບ ແລະ ຮັດຄາງ ໃຫ້ພໍດີທຸກເທື່ອ ທັງຜູ້ຂັບ ຂີ່ ແລະ ຜູ້ຊ້ອນ ບໍ່ວ່າຈະຂີ່ ລົດຈັກໃນໄລຍະໃກ້ ຫຼື ໄກ ກາງເວັນ ຫຼື ກາງຄືນ.
- ໝວກກັນກະທົບມີກຳນົດການນຳໃຊ້ ສະເລ່ຍ 3 ປີ, ຖ້າເກີນກວ່ານີ້ ຄວນຊື້ໝວກກັນ ກະທົບໜ່ວຍໃໝ່ ເພາະວ່າຖ້າເກີດອຸບປະຕິເຫດຂຶ້ນມາຈະໄດ້ບໍ່ຄຸ້ມເສຍ. ພລາສຕິກ ແລະ ໂຟມ ມີການເສື່ອມສະພາບ ຈົນບໍ່ສາມາດຮັບແຮງກະທົບໄດ້.
- ໝວກທີ່ເຄີຍເຮັດຕົກມາແລ້ວ ອາຍຸການໃຊ້ງານກໍ່ຈະໜ້ອຍລົງ.



## ວິທີການເລືອກໝວກກັນກະທົບ

- ໝວກກັນກະທົບແບບເຕັມໜ້າດີທີ່ສຸດ ບັງລົມ, ກັນຝຸ່ນ, ປົກປ້ອງທົ່ວຫົວ ແລະ ບໍ່ຕ້ອງ ຢ້ານວ່າຈະ ຫາຍໃຈບໍ່ອອກ ຫຼື ບໍ່ໄດ້ຍິນສຽງ ເພາະມີການເຈາະຮູ ໄວ້ແລ້ວ.
- ເລືອກໝວກກັນກະທົບທີ່ຜ່ານມາດຕະຖານ ຮັບຮອງ.
- ໝວກກັນກະທົບທີ່ໄດ້ມາດຕະຖານຈະມີນໍ້າໜັກ ຫຼາຍກວ່າ ໝວກທີ່ບໍ່ໄດ້ມາດຕະຖານ ເລັກໜ້ອຍ.
- ເຖິງຈະໄດ້ໝວກກັນກະທົບລ້າໆ ກໍ່ຄວນກວດສອບ ຄືນວ່າເປັນໝວກທີ່ໄດ້ມາດຕະຖານ ແລ້ວຫຼືຍັງ
- ເລືອກສີແຈ້ງໆ ແຈດໆ ທີ່ສາມາດແນມເຫັນແຕ່ໄກໆ ເຊັ່ນ: ສີເຫຼືອງ, ສີສົ້ມ, ຂາວ ຫຼື ແດງ
- ຕ້ອງມີສາຍຮັດຄາງ





| ✗ | ✓ |
| --- | --- |
| ການໃສ່ໝວກກັນກະທົບ ຈະບັງສາຍຕາເວລາຂັບຂີ່ | ໝວກກັນກະທົບ ບໍ່ໄດ້ບັງສາຍຕາເວລາ ຂັບຂີ່, ເພາະວ່າປົກກະຕິຜູ້ຂັບຂີ່ຈະແນມເຫັນ ບໍ່ເກີນ 105 ອົງສາ. |
| ການໃສ່ໝວກກັນກະທົບ ຈະເຮັດໃຫ້ ບໍ່ໄດ້ຍິນສຽງ | ໝວກກັນກະທົບບໍ່ໄດ້ເຮັດໃຫ້ການໄດ້ຍິນເປັນ ບັນຫາ ເນື່ອງຈາກເປືອກນອກ ບໍລິເວນຫູຈະ ມີການເຈາະຊ່ອງສຳລັບການໄດ້ຍິນຢູ່ແລ້ວ ແລະ ໄດ້ຜ່ານມາດຕະຖານການກວດສອບ ວ່າບໍ່ກີດຂວາງການໄດ້ຍິນ |
| ໃສ່ໝວກກັນກະທົບທີ່ມີນໍ້າໜັກ ຫຼາຍ ຈະເຮັດໃຫ້ຄໍບາດເຈັບ ຫຼື ເຮັດໃຫ້ກະດູກຄໍຫັກ | ການບາດເຈັບບໍລິເວນຄໍ ມີສາເຫດມາຈາກ ການທີ່ຫົວໂນ້ມໄປທາງໜ້າ ຫຼື ແງນກັບໄປ ທາງຫຼັງຢ່າງໄວ ຈາກແຮງທີ່ເກີດຈາກການ ຕຳ. ຜົນການວິໄຈບໍ່ພົບວ່າໝວກກັນກະທົບ ເຮັດໃຫ້ເກີດອາການບາດເຈັບ ຫຼື ເປັນເຫດ ໃຫ້ກະດູກຄໍຫັກ. |

ຄວາມຈິງກໍ່ເປັນກົດເກນທີ່ດີ ຫາກແຕ່ວ່າຍາມອາກາດຮ້ອນໆ ໃສ່ໝວກນີ້ເຂົ້າໄປ ຫາຍໃຈຍາກ ຢ້ານຂາດໃຈຕາຍກ່ອນເກີດອຸບັດຕິເຫດ ມີໃຜເຄີຍມີບັນຫາ ເຄີຍຄິດແກ້ໄຂເລື່ອງນີ້ບໍ່ ກົດໃສ່ໝວກກັນກະທົບນີ້ເປັນກົດຂອງສາກົນທົ່ວໂລກ ຊຶ່ງບໍລິສັດເຮັດໝວກຂາຍເປັນຜູ້ຜັກດັນ ທັງຂາຍລໍ່າລວຍ ແຕ່ວ່າແຕ່ລະປະເທດດິນຟ້າອາກາດບໍ່ຄືກັນ ຄວນໝູນໃຊ້ໃຫ້ຖືກກັບໃນແຕ່ລະທ້ອງຖິ່ນ ແຕ່ລະປະເທດ ບ້ານເຮົາໃສ່ບາງລະດູຄົງຈະດີ ສິ່ງທີ່ຄວນຫ້າມຂີ່ລົດຈັກຄືບໍ່ໃຫ້ໃຊ້ໂທລະສັບ ບໍ່ໃຫ້ເອົາລູກເລັກເດັກນ້ອຍໆຂີ່ໄປນຳໂດຍບໍ່ມີຫຍ◌ັງຄຸ້ມກັນເລີຍ ເພາະນີ້ຄືບັນຫາໃຫຍ◌່ໃນທ້ອງຖີ່ນຂອງບ້ານເຮົາ ມີເຈັບ ຕາຍເກືອບທຸກມື້ ເພາະສາເຫດດັ່ງກ່າວ

1

Like Reply 4w Edited




ບໍ່ມີໃຜສົນໃນແລະປະຕິບັດຕາມດອກໃຜໆກະຢ້ານເສຍຊີງຜົມຫ່ວງຊີງຜົມຫຼາຍກ່ວາຊີວິດຂອງໂຕເອງດ້ວຍສ້ຳ

2

Like Reply 4w

ໃສ່ແລ້ວລາຍຕາວິນຫົວ.

Like Reply 4w

# ເປັນຫຍັງຈຶ່ງບໍ່ຍອມໃສ່ໝວກກັນກະທົບ?



## ບໍ່ມີຂໍ້ແກ້ໂຕ

ອຸບປະຕິເຫດເທິງທ້ອງຖະໜົນສາມາດເກີດຂຶ້ນໄດ້ທຸກເມື່ອ
ຖ້າທ່ານບໍ່ໃສ່ໝວກກັນກະທົບ ອາດເກີດການບາດເຈັບ ສາຫັດ,
ພິການຖາວອນ, ເຮັດໃຫ້ສູນເສຍລາຍໄດ້ ແລະ ເສຍຊີວິດ.